ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---------------------

ກະຊວງການເງິນ
ກົມພາສີ

ເລກທີ 05470 /ກພສ
ນະຄອນຫຼວງວຽງຈັນ, ວັນທີ 21 SEP 2018

# ແຈ້ງການ

ເຖິງ: - ຫົວໜ້າພະແນກການອ້ອມຂ້າງກົມພາສີ
- ຫົວໜ້າກອງຄຸ້ມຄອງພາສີທົ່ວປະເທດ
- ຫົວໜ້າດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ
- ຜູ້ປະກອບການທີ່ນຳເຂົ້າສິນຄ້າປະເພດນ້ຳມັນເຕົາ

ເລື່ອງ: ການຈັດເກັບຄ່າພາສີ-ອາກອນ ແບບປົກກະຕິ (ອັດຕາທຽບຖານ) ສຳລັບການນຳເຂົ້າສິນຄ້າປະເພດນ້ຳມັນເຕົາ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1460/ຫສນຍ.ກຄສ, ລົງວັນທີ 05 ກັນຍາ 2018 ວ່າດ້ວຍການຈັດເກັບຄ່າພາສີ-ອາກອນໃນການນຳເຂົ້າສິນຄ້າປະເພດນ້ຳມັນເຕົາ;
- ອີງຕາມ ທິດຊີ້ນຳຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ຄັ້ງວັນທີ 07 ກັນຍາ 2018.

ເພື່ອເພີ່ມທະວີການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກຳນົດອອກໃນແຕ່ລະໄລຍະ ແລະ ເຮັດໃຫ້ການຈັດເກັບຄ່າພາສີ-ອາກອນ ໃນການນຳເຂົ້ານ້ຳມັນເຕົາໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ກົມພາສີ ອອກແຈ້ງການດັ່ງນີ້

1. ການນຳເຂົ້ານ້ຳມັນເຕົາ ແມ່ນໃຫ້ຈັດຕັ້ງປະຕິບັດການເກັບຄ່າພາສີ-ອາກອນ ຕາມເນື້ອໃນແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1460/ຫສນຍ.ກຄສ, ລົງວັນທີ 05 ກັນຍາ 2018 ຊຶ່ງປ່ຽນແທນຈາກການເກັບແບບເດັດຖານຕາມແຈ້ງການ ສະບັບເລກທີ 01030/ກງ.ຫກ, ລົງວັນທີ 20 ພຶດສະພາ 2003.
2. ມອບໃຫ້ພະແນກແຜນການແລະຂໍ້ມູນຂ່າວສານ ກຳນົດເອົາສິນຄ້າປະເພດນ້ຳມັນເຕົາ (ລະຫັດສິນຄ້າ: 2710.19. 79.00) ຊຶ່ງຖືກເກັບຄ່າພາສີຂາເຂົ້າ 20%, ອາກອນມູນຄ່າເພີ່ມ 10% ໂຫຼດລົງໃນລະບົບອາຊີກູດາໃຫ້ສຳເລັດໂດຍໄວ ແລະ ສາມາດຈັດຕັ້ງປະຕິບັດໄດ້.

3. ສໍາລັບມູນຄ່າແຈ້ງພາສີຂາເຂົ້າ ແມ່ນກໍານົດເອົາມູນຄ່າສິນຄ້າລວມທັງຄ່າຂົນສົ່ງ ແລະ/ຫຼື ຄ່າປະກັນໄພ ທີ່ສົ່ງຮອດຊາຍແດນ ບ່ອນນໍາເຂົ້າ ຕາມທີ່ກໍານົດໄວ້ໃນມາດຕາທີ່ 13 ຂອງກົດໝາຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ເປັນບ່ອນອີງໃນການຄິດໄລ່ຄ່າພາສີ-ອາກອນ.
4. ພະແນກການອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີທົ່ວປະເທດ ເປັນເຈົ້າການຊີ້-ນໍາບັນດາດ່ານຊາຍແດນ ໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ມີຄວາມເປັນເອກະພາບ, ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ ເພື່ອມີວິທີການແກ້ໄຂຕາມລະບຽບການ.
5. ແຈ້ງການສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ຕຸລາ 2018 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

ບ່ອນສົ່ງ:

- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ 01 ສະບັບ "ເພື່ອໃຊ້ຕາງລາຍງານ"
- ທ່ານ ຫົວໜ້າຫ້ອງການ ກະຊວງ ອຸດສາຫະກໍາແລະການຄ້າ 01 ສະບັບ "ເພື່ອໃຊ້ຕາງລາຍງານ"
- ພະແນກການອ້ອມຂ້າງກົມ, ຫົວໜ້າຂອງຄຸ້ມຂອງພາສີ ດ່ານພາສີຊາຍແດນ 01 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ສະພາການຄ້າ ແລະ ອຸດສາຫະກໍາ 01 ສະບັບ "ເພື່ອຊາບ, ຕິດຕາມ"
- ກຸ່ມຜູ້ນໍາເຂົ້ານໍ້າມັນເຊື້ອໄຟແລະອາຍແກັດ 01 ສະບັບ "ເພື່ອຮັບຊາບແລະປະຕິບັດ"